ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 177 /ລບ

ນະຄອນຫຼວງວຽງຈັນ, ວັນທີ 05. 04. 2012.

# ດຳລັດ

## ວ່າດ້ວຍລັດຖະກອນຄູ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 3 ກໍລະ ກົດ 2007;
- ອີງຕາມ ມະຕິຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ມັງກອນ 2012 ສະບັບເລກທີ 02/ລບ, ລົງວັນທີ 9 ກຸມພາ 2012;
- ອີງຕາມໜັງສືສະເໜີຂອງ ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 368/ສສກ.ຈຕ, ລົງວັນທີ 15 ມີນາ 2012.

## ລັດຖະບານ ອອກດຳລັດ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດນະໂຍບາຍ, ຫຼັກການ, ລະບຽບການ, ວິທີການກໍ່ສ້າງ - ບຳລຸງ, ການຄຸ້ມຄອງ ແລະ ນຳໃຊ້ລັດຖະກອນຄູ.

**ມາດຕາ 2. ລັດຖະກອນຄູ**

ລັດຖະກອນຄູ ແມ່ນລັດຖະກອນວິຊາການ ປະຕິບັດໜ້າທີ່ສິດສອນ, ສຶກສາອົບຮົມຜູ້ຮຽນຢູ່ໂຮງຮຽນ, ສູນ ແລະ ສະຖາບັນການສຶກສາຂອງລັດ. ລັດຖະກອນຄູ ຕາມດຳລັດສະບັບນີ້ ເອີ້ນວ່າ "ຄູ".

**ມາດຕາ 3. ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ນຳໃຊ້ສຳລັບຄູສັງກັດລັດ (ຜູ້ມີອາຊີບເປັນຄູ) ປະຈຳການຢູ່ໂຮງຮຽນ ແລະສະຖາບັນການສຶກສາຂອງລັດ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຂະແໜງການສຶກສາ ແລະຂະແໜງການອື່ນ.

## ໝວດທີ 2
## ກຸ່ມອາຊີບຄູ ແລະການກໍ່ສ້າງ - ບຳລຸງຄູ

**ມາດຕາ 4. ກຸ່ມອາຊີບຄູ**

ອາຊີບຄູ ໄດ້ຈັດແບ່ງເປັນກຸ່ມ ຕາມໜ້າທີ່ ແລະລະດັບການສຶກສາ ໃນລະບົບການສຶກສາແຫ່ງຊາດ ດັ່ງນີ້:

- ກຸ່ມ 1 : ຄູລ້ຽງເດັກ ແລະ ຄູອະນຸບານສຶກສາ;
- ກຸ່ມ 2 : ຄູຫ້ອງກຽມ ແລະ ຄູປະຖົມສຶກສາ;
- ກຸ່ມ 3 : ຄູມັດທະຍົມສຶກສາຕອນຕົ້ນ;
- ກຸ່ມ 4 : ຄູມັດທະຍົມສຶກສາຕອນປາຍ;
- ກຸ່ມ 5 : ຄູອາຊີວະສຶກສາ;
- ກຸ່ມ 6 : ຄູມະຫາວິທະຍາໄລ;
- ກຸ່ມ 7 : ຄູສຶກສານິເທດ ແລະ ຄູຝຶກປະຈຳ;
- ກຸ່ມ 8 : ຄູມີຕຳແໜ່ງເປັນຜູ້ບໍລິຫານ.

**ມາດຕາ 5. ຮູບແບບການກໍ່ສ້າງ - ບຳລຸງຄູ**

ຄູທຸກກຸ່ມໄດ້ຮັບການກໍ່ສ້າງ ແລະ ບຳລຸງຕາມ 3 ຮູບແບບພື້ນຖານ ດັ່ງນີ້:

1. ຮູບແບບກໍ່ສ້າງປົກກະຕິຕາມລະດັບຂັ້ນຂອງຫຼັກສູດໄລຍະຍາວ;
2. ຮູບແບບບຳລຸງວິຊາຄູ ແລະ ວິຊາສະເພາະຕາມຫຼັກສູດໄລຍະສັ້ນ;
3. ຮູບແບບຮຽນວິຊາຊີບຄູ ແລະ ວິຊາສະເພາະຕາມຫຼັກສູດຕໍ່ເນື່ອງ ຫຼື ເຊື່ອມຕໍ່.

**ມາດຕາ 6. ມາດຕະຖານ ແລະຫຼັກສູດ ການກໍ່ສ້າງ - ບຳລຸງຄູ**

ການກໍ່ສ້າງ - ບຳລຸງຄູອາຊີບກຸ່ມຕ່າງໆ ໃຫ້ປະຕິບັດຕາມມາດຕະຖານ ແລະ ຫຼັກສູດທີ່ກະຊວງສຶກສາທິການ ແລະກິລາ ອະນຸມັດ ແລະປະກາດໃຊ້.

**ມາດຕາ 7. ຄວາມຮັບຜິດຊອບໃນການກໍ່ສ້າງ - ບຳລຸງຄູ**

ການກໍ່ສ້າງ-ບຳລຸງຄູອາຊີບທຸກກຸ່ມ ເປັນຄວາມຮັບຜິດຊອບຂອງລັດຖະບານ ຊຶ່ງແມ່ນວິທະຍາໄລຄູ ຫຼືສະຖາບັນການສຶກສາອື່ນໆຂອງລັດ ທີ່ໄດ້ຮັບການມອບໝາຍໃຫ້ຈາກກະຊວງສຶກສາທິການແລະກິລາ ປະຕິບັດໜ້າທີ່ກໍ່ສ້າງ ແລະບຳລຸງຄູ ຕາມແຜນພັດທະນາການສຶກສາໃນແຕ່ລະໄລຍະ.

**ມາດຕາ 8. ການຄັດເລືອກຜູ້ຮຽນເປັນຄູອາຊີບ**

ຜູ້ສະໝັກຮຽນເປັນຄູອາຊີບລະດັບຕ່າງໆ ໃຫ້ປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານທີ່ກະຊວງສຶກສາທິການ ແລະກິລາ ກຳນົດ.

**ມາດຕາ 9. ທຶນການສຶກສາສຳລັບຜູ້ຮຽນເປັນຄູອາຊີບ**

ຜູ້ທີ່ໄດ້ຮັບການຄັດເລືອກເຂົ້າຮຽນເປັນຄູອາຊີບທຸກລະດັບ ໄດ້ຮັບການອຸດໜູນທຶນການສຶກສາຈາກລັດຖະບານຕາມລະດັບຊັ້ນຮຽນ ແລະ ພາຍຫຼັງຮຽນຈົບຫຼັກສູດວິຊາຊີບຄູແລ້ວ ຜູ້ກ່ຽວຕ້ອງໄປປະກອບອາຊີບເປັນຄູ ຕາມສັນຍາຜູກພັນການຮັບທຶນການສຶກສາລະຫວ່າງຜູ້ຮຽນ ແລະ ອົງການບໍລິຫານລັດຂັ້ນທ້ອງຖິ່ນ ຫຼື ສະຖາບັນການສຶກສາທີ່ກ່ຽວຂ້ອງ.

## ໝວດທີ 3

## ການບັນຈຸ, ສັບຊ້ອນ ແລະ ຄຸ້ມຄອງຄູ

### ມາດຕາ 10. ເງື່ອນໄຂການບັນຈຸຄູ

ຜູ້ທີ່ຮຽນຈົບຄູອາຊີບ ຫຼື ຜູ້ທີ່ຮຽນຈົບວິຊາສະເພາະສາຂາອື່ນ ລ້ວນແຕ່ມີສິດສະໝັກປະກອບອາຊີບເປັນຄູ ໂດຍການຄັດເລືອກຕາມເງື່ອນໄຂ, ມາດຕະຖານ ແລະ ຄວາມຕ້ອງການຕົວຈິງທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດ. ການບັນຈຸ ຫຼື ຮັບຄູໃໝ່ທຸກກຸ່ມ ໃຫ້ປະຕິບັດໜຶ່ງຄັ້ງຕໍ່ໜຶ່ງສົກຮຽນ ໂດຍກຳນົດເອົາ ວັນທີ 1 ເດືອນ ສິງຫາ ຂອງທຸກປີ ເປັນວັນເລີ່ມຕົ້ນເຂົ້າເປັນຄູໃໝ່ ຢ່າງເປັນທາງການ.

### ມາດຕາ 11. ອັດຕາສ່ວນການບັນຈຸຄູ

- ກຸ່ມ 1 ໃຫ້ບັນຈຸຕາມອັດຕາສ່ວນ: ຄູ 1 ຄົນ ຕໍ່ນັກຮຽນ 15 ຄົນ;
- ກຸ່ມ 2 ໃຫ້ບັນຈຸຕາມອັດຕາສ່ວນ: ຄູ 1 ຄົນ ຕໍ່ນັກຮຽນ 34 ຄົນ;
- ກຸ່ມ 3 ໃຫ້ບັນຈຸຕາມອັດຕາສ່ວນ: ຄູ 1 ຄົນ ຕໍ່ນັກຮຽນ 30 ຄົນ;
- ກຸ່ມ 4 ໃຫ້ບັນຈຸຕາມອັດຕາສ່ວນ: ຄູ 1 ຄົນ ຕໍ່ນັກຮຽນ 25 ຄົນ;
- ກຸ່ມ 5 ໃຫ້ບັນຈຸຕາມອັດຕາສ່ວນ: ຄູ 1 ຄົນ ຕໍ່ນັກຮຽນ 20 ຄົນ;
- ກຸ່ມ 6 ໃຫ້ບັນຈຸຕາມອັດຕາສ່ວນ: ຄູ 1 ຄົນ ຕໍ່ນັກສຶກສາ 30 ຄົນ.

### ມາດຕາ 12. ການຝຶກງານຂອງຄູໃໝ່

ຜູ້ທີ່ຮຽນຈົບຄູອາຊີບຈະໄດ້ຮັບການບັນຈຸເປັນຄູ ໂດຍບໍ່ຜ່ານໄລຍະການຝຶກງານ; ຜູ້ທີ່ຮຽນຈົບວິຊາສະເພາະສາຂາອື່ນ ຈະໄດ້ຜ່ານການຝຶກງານເປັນເວລາ 9 ເດືອນ ຫຼື ໜຶ່ງສົກຮຽນ ເພື່ອເລື່ອນເປັນຄູສົມບູນ. ໃນກໍລະນີບໍ່ຜ່ານການປະເມີນ, ຄູໃໝ່ມີສິດສືບຕໍ່ຝຶກງານອີກສີ່ເດືອນແລ້ວຈະໄດ້ຮັບການປະເມີນຄືນເປັນຄັ້ງສຸດທ້າຍ ເພື່ອທົດສອບຄວາມຮູ້ຄວາມສາມາດ ແລະ ການປະພຶດທາງດ້ານຄຸນສົມບັດແລະການສິດສອນ; ຜູ້ທີ່ຢູ່ໃນໄລຍະຝຶກງານ ຈະບໍ່ມີສິດດຳລົງຕຳແໜ່ງບໍລິຫານປະເພດຕ່າງໆ, ບໍ່ອະນຸຍາດໃຫ້ໄປຮຽນຕໍ່ພາຍໃນ ຫຼື ຕ່າງປະເທດ ແລະ ບໍ່ອະນຸຍາດໃຫ້ໄປປະຈຳການຢູ່ບ່ອນອື່ນ.

### ມາດຕາ 13. ການຄຸ້ມຄອງຄູ

ຄູໄດ້ຮັບການຄຸ້ມຄອງຕາມລະບົບການຈັດຕັ້ງຂອງລັດ ໂດຍມີການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງ ແລະ ທ້ອງຖິ່ນ.

## ໝວດທີ 4
## ນະໂຍບາຍ, ເງິນເດືອນ ແລະ ສະຫວັດດີການຄູ

### ມາດຕາ 14. ນະໂຍບາຍຕໍ່ຄູ

ຄູມີສິດໄດ້ຮັບນະໂຍບາຍດ້ານຕ່າງໆ ຕາມກົດໝາຍ ແລະ ລະບຽບການຂອງລັດ ຄືກັບລັດຖະກອນບໍລິຫານທົ່ວໄປ. ນອກຈາກນັ້ນ ຄູຍັງໄດ້ຮັບການປະຕິບັດນະໂຍບາຍສະເພາະບາງດ້ານຄື: ຖານະທາງວິຊາການ (ຕຳແໜ່ງວິຊາການ ແລະ ນາມມະຍົດ), ກຽດສັກສີໃນສັງຄົມ, ຊີວິດການເປັນຢູ່, ການຍ້ອງຍໍ, ການລາພັກ ແລະ ຮັບເບັ້ຍບຳນານ. ສຳລັບຄູຜູ້ປະຕິບັດໜ້າທີ່ ຢູ່ເຂດທຸລະກັນດານຫ່າງໄກສອກຫຼີກ ຈະໄດ້ຮັບການປະຕິບັດນະໂຍບາຍພິເສດຈາກລັດຖະບານ.

### ມາດຕາ 15. ໂຄງສ້າງເງິນເດືອນຄູ

ຄູ ມີໂຄງສ້າງເງິນເດືອນສະເພາະ ຊຶ່ງປະກອບມີ 5 ຊັ້ນ, 95 ຂັ້ນ ແລະ95 ດັດສະນີ ດັ່ງນີ້:

- ຊັ້ນທີ I ປະກອບດ້ວຍ 25 ຂັ້ນ, ແຕ່ດັດສະນີ 156 ເຖິງ 306;
- ຊັ້ນທີ II ປະກອບດ້ວຍ 15 ຂັ້ນ, ແຕ່ດັດສະນີ 209 ເຖິງ 365;
- ຊັ້ນທີ III ປະກອບດ້ວຍ 15 ຂັ້ນ, ແຕ່ດັດສະນີ 260 ເຖິງ 472;
- ຊັ້ນທີ IV ປະກອບດ້ວຍ 15 ຂັ້ນ, ແຕ່ດັດສະນີ 308 ເຖິງ 538;
- ຊັ້ນທີ V ປະກອບດ້ວຍ 25 ຂັ້ນ, ແຕ່ດັດສະນີ 389 ເຖິງ 859.

### ມາດຕາ16. ການຈັດເຂົ້າຊັ້ນ-ຂັ້ນເງິນເດືອນຂອງຄູ

ຄູໃໝ່ທຸກຄົນ ຈະໄດ້ຮັບການບັນຈຸເຂົ້າຊັ້ນໜຶ່ງ ຕາມປະກາສະນີຍະບັດ ແລະ ວຸດທິການສຶກສາ ດັ່ງນີ້:

1. ຊັ້ນຕົ້ນ ແລະທຽບເທົ່າ: ເລີ່ມຕົ້ນ ຊັ້ນ 1, ຂັ້ນ 1 ເຖິງ 4, ດັດສະນີ 156 ເຖິງ 165;
2. ຊັ້ນກາງ ແລະທຽບເທົ່າ: ເລີ່ມຕົ້ນ ຊັ້ນ 1, ຂັ້ນ 7 ເຖິງ 9, ດັດສະນີ 180 ເຖິງ 190;
3. ຊັ້ນສູງ ຫຼືອະນຸປະລິນຍາ ແລະທຽບເທົ່າ: ເລີ່ມຕົ້ນ ຊັ້ນ 1, ຂັ້ນ 13 ເຖິງ 15, ດັດສະນີ 212 ເຖິງ 226;
4. ປະລິນຍາຕີ ແລະ ທຽບເທົ່າ: ເລີ່ມຕົ້ນ ຊັ້ນ 1, ຂັ້ນ 16 ເຖິງ 17, ດັດສະນີ 233 ເຖິງ 240;
5. ເໜືອປະລິນຍາຕີ: ເລີ່ມຕົ້ນ ຊັ້ນ 1, ຂັ້ນ 17 ເຖິງ 18, ດັດສະນີ 240 ເຖິງ 247;
6. ປະລິນຍາໂທ ແລະ ທຽບເທົ່າ: ເລີ່ມຕົ້ນ ຊັ້ນ 1, ຂັ້ນ 18 ເຖິງ 19, ດັດສະນີ 247 ເຖິງ 254;
7. ເໜືອປະລິນຍາໂທ: ເລີ່ມຕົ້ນ ຊັ້ນ 1, ຂັ້ນ 19 ເຖິງ 20, ດັດສະນີ 254 ເຖິງ 261;
8. ປະລິນຍາເອກ ແລະ ທຽບເທົ່າ: ເລີ່ມຕົ້ນ ຊັ້ນ 1, ຂັ້ນ 21 ເຖິງ 22, ດັດສະນີ 270 ເຖິງ 279;
9. ເໜືອປະລິນຍາເອກ: ເລີ່ມຕົ້ນ ຊັ້ນ 1, ຂັ້ນ 22 ເຖິງ 23, ດັດສະນີ 279 ເຖິງ 288.

ຄູທີ່ໄດ້ຮັບຕຳແໜ່ງວິຊາການ ແລະ ນາມມະຍົດ ຖານເງິນເດືອນຂອງຜູ້ກ່ຽວຈະປັບປຸງໄປຕາມຊັ້ນ - ຂັ້ນເງິນເດືອນຂອງຄູຕາມແຕ່ລະກໍລະນີ; ສ່ວນການຄິດໄລ່ແລະການທຽບຊັ້ນ - ຂັ້ນເງິນເດືອນຂອງຄູ ມອບໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ແນະນຳລະອຽດ.

**ມາດຕາ 17. ການກຳນົດເວລາປະຕິບັດໜ້າທີ່ຂອງຄູ**

ຄູທຸກຄົນປະຕິບັດໜ້າທີ່ຕາມວັນເວລາລັດຖະການ ຄືກັບລັດຖະກອນທົ່ວໄປ ໂດຍກຳນົດຊົ່ວໂມງສອນຕົວຈິງ ດັ່ງນີ້:

- ກຸ່ມ 1 : ອາທິດໜຶ່ງ ບໍ່ໃຫ້ ເກີນ 30 ຊົ່ວໂມງ;
- ກຸ່ມ 2 : ອາທິດໜຶ່ງ ບໍ່ໃຫ້ ເກີນ 25 ຊົ່ວໂມງ;
- ກຸ່ມ 3 : ອາທິດໜຶ່ງ ບໍ່ໃຫ້ ເກີນ 18 ຊົ່ວໂມງ;
- ກຸ່ມ 4 : ອາທິດໜຶ່ງ ບໍ່ໃຫ້ ເກີນ 16 ຊົ່ວໂມງ;
- ກຸ່ມ 5 : ອາທິດໜຶ່ງ ບໍ່ໃຫ້ ເກີນ 14 ຊົ່ວໂມງ;
- ກຸ່ມ 6 : ອາທິດໜຶ່ງ ບໍ່ໃຫ້ ເກີນ 12 ຊົ່ວໂມງ;
- ກຸ່ມ 7 : ອາທິດໜຶ່ງ ບໍ່ໃຫ້ ເກີນ 8 ຊົ່ວໂມງ;
- ກຸ່ມ 8 : ອາທິດໜຶ່ງ ບໍ່ໃຫ້ ເກີນ 6 ຊົ່ວໂມງ.

ສ່ວນເວລາລັດຖະການທີ່ຍັງເຫຼືອຈາກການສິດສອນ ໃຫ້ໃຊ້ເປັນເວລາຄົ້ນຄ້ວາ, ແຕ່ງບົດສອນ, ກວດບົດຮຽນ, ເຮັດວຽກງານບໍລິຫານ ແລະ ປະຕິບັດກິດຈະກຳອື່ນໆ ທີ່ຮັບໃຊ້ການຮຽນການສອນ. ກໍລະນີ ຄູປະຕິບັດໜ້າທີ່ສິດສອນເກີນ ເວລາທີ່ໄດ້ກຳນົດຕໍ່ອາທິດນັ້ນ ໃຫ້ຄິດໄລ່ເປັນຊົ່ວໂມງເພີ່ມ ໂດຍມອບໃຫ້ ກະຊວງສຶກສາທິການ ແລະ ກິລາ ກຳນົດລະອຽດຄ່າຕອບແທນແຮງງານເພີ່ມໃຫ້ຄູຕາມກຸ່ມອາຊີບຄູ ແລະ ຕາມວຸດທິການສຶກສາຂອງຄູແຕ່ລະຄົນ.

**ມາດຕາ 18. ການປະເມີນຜົນງານຂອງຄູ**

ຄູທຸກຄົນຈະໄດ້ຮັບການຕີລາຄາ ປະເມີນຜົນງານ ໃນແຕ່ລະສົກຮຽນ ໂດຍຄະນະກຳມະການທີ່ໄດ້ຮັບການແຕ່ງຕັ້ງ ຢູ່ສະຖາບັນການສຶກສາແຕ່ລະແຫ່ງ ຊຶ່ງຄູຈະໄດ້ຮັບການຕີລາຄາໂດຍຈັດເປັນປະເພດ ດັ່ງນີ້:

- ປະເພດ 1 : ດີ;
- ປະເພດ 2 : ກາງ;
- ປະເພດ 3 : ອ່ອນ.

ສ່ວນເງື່ອນໄຂ, ມາດຕະຖານ ແລະ ວິທີການປະເມີນຜົນງານຂອງຄູ ມອບໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ກຳນົດຢ່າງລະອຽດ ເພື່ອໃຫ້ມີຄວາມເປັນເອກະພາບ, ໂປ່ງໃສ ແລະ ຍຸຕິທຳ ໃນຂອບເຂດທົ່ວປະເທດ.

**ມາດຕາ 19. ການເລື່ອນຊັ້ນ - ຂັ້ນເງິນເດືອນຂອງຄູ**

ຄູທຸກກຸ່ມຈະໄດ້ຮັບການພິຈາລະນາ ໃຫ້ມີການເລື່ອນ ຫຼື ຂຶ້ນຊັ້ນ - ຂັ້ນເງິນເດືອນໃຫ້ສູງຂຶ້ນ ໃນແຕ່ລະປີ ໂດຍອີງຕາມການປະເມີນຜົນງານທີ່ຖືກຈັດເປັນປະເພດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 18 ຂອງດຳລັດສະບັບນີ້ ຊຶ່ງມີຫຼັກການລວມ ດັ່ງນີ້:

- ຄູປະເພດ 1: ໜຶ່ງປີ ຕໍ່ ໜຶ່ງຂັ້ນ;
- ຄູປະເພດ 2: ສອງປີ ຕໍ່ ໜຶ່ງ ຂັ້ນ;

- ຄູປະເພດ 3: ໃຫ້ຢຸດເຊົາການສິດສອນ ແລະ ໂອນຍ້າຍໄປຮັບໜ້າທີ່ອື່ນຕາມຄວາມເໝາະສົມ ຫຼື ອາດຈະລຶບຊື່ອອກຈາກບັນຊີລັດຖະກອນຄູ.

**ມາດຕາ 20. ເງິນອຸດໜູນຕຳແໜ່ງຄູ**

ຄູຜູ້ທີ່ໄດ້ຮັບການແຕ່ງຕັ້ງໃຫ້ດຳລົງຕຳແໜ່ງບໍລິຫານປະເພດຕ່າງໆ ມີສິດໄດ້ຮັບເງິນອຸດໜູນຕຳແໜ່ງຄືກັບຕຳແໜ່ງລັດບໍລິຫານທົ່ວໄປ.

ຄູຜູ້ທີ່ໄດ້ຮັບຕຳແໜ່ງວິຊາການຄູ ແລະ ນາມມະຍົດຄູ ຈະໄດ້ຮັບເງິນອຸດໜູນຕາມນະໂຍບາຍຂອງລັດຖະບານ.

**ມາດຕາ 21. ການອຸດໜູນວິຊາຊີບຄູ**

ຄູທີ່ສອນຢູ່ໂຮງຮຽນ ແລະ ສະຖາບັນການສຶກສາປະເພດຕ່າງໆ ໄດ້ຮັບເງິນອຸດໜູນວິຊາຊີບຄູຕາມຂັ້ນການສອນ ຊຶ່ງມີລາຍລະອຽດດັ່ງນີ້:

1. ຄູທີ່ສອນໃນໂຮງຮຽນວິຊາຊີບຊັ້ນສູງ, ວິທະຍາໄລ ແລະ ມະຫາວິທະຍາໄລ ໄດ້ຮັບການອຸດໜູນ 10% ຂອງເງິນເດືອນພື້ນຖານ;
2. ຄູທີ່ສອນໃນໂຮງຮຽນວິຊາຊີບ, ໂຮງຮຽນວິຊາສະເພາະຊັ້ນຕົ້ນ ແລະ ຊັ້ນກາງ ໄດ້ຮັບການອຸດໜູນ 15% ຂອງເງິນເດືອນພື້ນຖານ;
3. ຄູທີ່ສອນຊັ້ນມັດທະຍົມສຶກສາ ໄດ້ຮັບການອຸດໜູນ 20% ຂອງເງິນເດືອນພື້ນຖານ;
4. ຄູທີ່ສອນຊັ້ນປະຖົມ ແລະ ອະນຸບານສຶກສາ ໄດ້ຮັບການອຸດໜູນ 25%ຂອງເງິນເດືອນພື້ນຖານ.

**ມາດຕາ 22. ການຍ້ອງຍໍຄູ**

ຄູຜູ້ປະຕິບັດໜ້າທີ່ວຽກງານ ມີຜົນງານດີເດັ່ນ ແລະ ມີຄຸນງາມຄວາມດີ ຈະໄດ້ຮັບການຍ້ອງຍໍດ້ວຍຮູບການຕ່າງໆ ຕາມນະໂຍບາຍຂອງລັດຖະບານ.

**ມາດຕາ 23. ການບຳລຸງຍົກລະດັບອາຊີບຄູ**

ຄູທຸກຄົນມີສິດໄດ້ຮັບທຶນການສຶກສາຈາກ ລັດຖະບານ ເພື່ອບຳລຸງຍົກລະດັບວິຊາຊີບຂອງຕົນດ້ວຍຮູບແບບຕ່າງໆ ທັງໄລຍະສັ້ນ, ໄລຍະຍາວ ຢູ່ພາຍໃນ, ຕ່າງປະເທດ ຕາມຄວາມສາມາດ ແລະ ເງື່ອນໄຂຕົວຈິງຂອງຄູແຕ່ລະຄົນ. ນອກຈາກນີ້ ຄູຍັງມີສິດໄດ້ຮັບການບຳລຸງຍົກລະດັບດ້ານທິດສະດີການເມືອງໃນຍາມພັກສົ້ນປີຮຽນ ຫຼື ເວລາທີ່ເໝາະສົມ ໃນແຕ່ລະປີ.

**ມາດຕາ 24. ການຍົກຍ້າຍຄູ**

ການຍົກຍ້າຍໜ້າທີ່ ແລະ ບ່ອນປະຈຳການຂອງຄູໃຫ້ປະຕິບັດ ດັ່ງນີ້:

1. ຍົກຍ້າຍຕາມຄວາມຕ້ອງການຂອງວຽກງານ;
2. ຍົກຍ້າຍຕາມການຮ້ອງຂໍທີ່ມີເຫດຜົນອັນສົມຄວນ;
3. ຍົກຍ້າຍດ້ວຍເຫດຜົນທາງວິໄນ.

**ມາດຕາ 25. ການລາພັກການຂອງຄູ**

ຄູທຸກຄົນມີສິດລາພັກລັດຖະການໄດ້ ຕາມກົດໝາຍວ່າດ້ວຍແຮງງານ ແລະ ຕາມດໍາລັດວ່າດ້ວຍລະບຽບຄຸ້ມຄອງລັດຖະກອນ ແຫ່ງ ສປປ ລາວ ໄດ້ກໍານົດໄວ້ ຄືກັບລັດຖະກອນທົ່ວໄປ. ນອກຈາກນີ້ ຄູຍັງມີສິດລາພັກປະຈໍາປີ ເປັນເວລາ ສອງເດືອນ ໂດຍຖືເອົາເວລາພັກລົ້ນປີຮຽນ.

**ມາດຕາ 26. ການຮັບເບັ້ຍບໍານານຂອງຄູ**

ຄູທຸກຄົນມີສິດໄດ້ຮັບນະໂຍບາຍຮັບເບັ້ຍບໍານານ ເມື່ອເຖິງອາຍຸກະສຽນ ແລະ ປີການຄົບຖ້ວນຕາມດໍາລັດວ່າດ້ວຍລະບຽບຄຸ້ມຄອງລັດຖະກອນ ແຫ່ງ ສປປ ລາວ ໄດ້ກໍານົດ. ນອກຈາກນີ້ ຄູທີ່ມີຄວາມຮູ້ຄວາມສາມາດ ແລະ ປະສົບການສູງໃນດ້ານການສິດສອນ, ມີສຸຂະພາບແຂງແຮງ, ການຈັດຕັ້ງມີຄວາມຕ້ອງການ ແລະ ຜູ້ກ່ຽວກໍມີຄວາມສະໝັກໃຈສືບຕໍ່ປະກອບສ່ວນສິດສອນ ກໍສາມາດຕໍ່ອາຍຸເປັນລັດຖະກອນຄູໄດ້ ແຕ່ບໍ່ເກີນສິບປີ.

**ມາດຕາ 27. ການສິ້ນສຸດການເປັນລັດຖະກອນຄູ**

ຄູຜູ້ໜຶ່ງຈະສິ້ນສຸດການເປັນລັດຖະກອນໃນກໍລະນີ ດັ່ງນີ້:

1. ຮັບເບັ້ຍບໍານານ;
2. ລາອອກ ຮັບເບັ້ຍບໍາເນັດ;
3. ຖືກຍົກຍ້າຍໄປປະຈໍາການຢູ່ຂະແໜງການອື່ນ;
4. ຖືກໄລ່ອອກຍ້ອນເຫດຜົນຕ່າງໆ;
5. ເສຍຊີວິດ .

## ໝວດທີ 5
## ວິໄນຂອງຄູ

**ມາດຕາ 28. ການປະພຶດຂອງຄູ**

ຄູທຸກຄົນ ນອກຈາກປະຕິບັດຕາມໜ້າທີ່, ສິດ ແລະ ພັນທະທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການສຶກສາແລ້ວ ຍັງຈະຕ້ອງປະພຶດຕົນ ດັ່ງນີ້:

1. ເປັນແບບຢ່າງທີ່ດີ ໃຫ້ຜູ້ຮຽນ ແລະ ສັງຄົມທົ່ວໄປ ທາງດ້ານການເມືອງແນວຄິດ, ຄຸນສົມບັດ, ທັດສະນະຫຼັກໝັ້ນ, ການເວົ້າຈາປາໄສ ແລະ ຄວາມສຸພາບຮຽບຮ້ອຍ;
2. ມີຈັນຍາບັນຂອງການເປັນຄູ ແລະ ມີຄວາມຍຸຕິທໍາ;
3. ມີຄວາມຊື່ສັດສຸດຈະລິດ ແລະ ຄວາມໂປ່ງໃສໃນອາຊີບ;
4. ມີຄວາມເອື້ອເຟື້ອເຜື່ອແຜ່ - ຮັກແພງ, ເຄົາລົບນັບຖື ແລະ ໃຫ້ກຽດຜູ້ຮຽນ.

**ມາດຕາ 29. ຂໍ້ຫ້າມສໍາລັບຄູ**

ນອກຈາກຂໍ້ຫ້າມສໍາລັບຄູ ທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການສຶກສາແລ້ວ ຄູຍັງມີຂໍ້ຫ້າມເພີ່ມເຕີມ ດັ່ງນີ້:

1. ຫ້າມພົວພັນກັບສິ່ງເສບຕິດ ແລະ ອະບາຍະມຸກຕ່າງໆ;

2. ຫ້າມເປີດການສອນເພີ່ມເປັນການສ່ວນຕົວໂດຍບໍ່ໄດ້ຮັບອະນຸຍາດຈາກການຈັດຕັ້ງ;

3. ຫ້າມສວຍໃຊ້ຖານະການເປັນຄູເພື່ອຂົ່ມຂູ່ ຫຼືບັງຄັບຜູ້ຮຽນໃນທຸກຮູບແບບ;

4. ຫ້າມກະທຳສິ່ງທີ່ຜິດຕໍ່ຮີດຄອງປະເພນີຂອງຊາດ;

5. ຫ້າມໂຄສະນາເຜີຍແຜ່ສິ່ງທີ່ເປັນໄພຕໍ່ສັງຄົມ ແລະປະເທດຊາດ.

ຄູຜູ້ທີ່ກະທຳຜິດ ຕາມຂໍ້ຫ້າມຂ້າງເທິງ ຈະຖືກສຳຫຼວດກວດກາ, ປະຕິບັດວິໄນ ຫຼື ຖືກລົງໂທດສະຖານເບົາ ຫຼືໜັກ ແລ້ວແຕ່ລະກໍລະນີຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 30. ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງສຶກສາທິການ ແລະກິລາ ອອກບົດແນະນຳລະອຽດໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະອອກຂໍ້ຕົກລົງກ່ຽວກັບການຄຸ້ມຄອງຄູ ທີ່ປະຕິບັດໜ້າທີ່ສິດສອນ ຢູ່ສະຖານທີ່ການສຶກສາພາກເອກະຊົນ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ,ອົງການປົກຄອງທ້ອງຖິ່ນທຸກຂັ້ນ, ສະຖານທີ່ການສຶກສາທຸກແຫ່ງ ຈົ່ງຮັບຮູ້ແລະຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ, ເປັນຮູບປະທຳ ແລະ ມີປະສິດທິຜົນ.

**ມາດຕາ 31. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ ແລະບົດບັນຍັດໃດທີ່ຂັດກັບດຳລັດສະບັບນີ້ ລ້ວນແລ້ວແຕ່ຖືກຍົກເລີກ.

ຕ. ລັດຖະບານ

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ